ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ — ເລກທີ 0819 / ກປ

ນະຄອນຫຼວງວຽງຈັນ, ວັນທີ 14 MAR 2011

# ຄຳສັ່ງ
## ຂອງລັດຖະມົນຕີ
## ກ່ຽວກັບການຄຸ້ມຄອງນຳໃຊ້ໄມ້ ເພື່ອຜະລິດຖ່ານ, ເພື່ອເປັນແຫຼ່ງພະລັງງານ ແລະ ເພື່ອເປັນສິນຄ້າ

ເຖິງ: - ຫົວໜ້າກົມປ່າໄມ້ ແລະ ກົມກວດກາປ່າໄມ້;
- ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ;
- ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ເທດສະບານ.

- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ, ລົງວັນທີ 22 ກັນຍາ 2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້;
- ອີງຕາມຍຸດທະສາດປ່າໄມ້ຮອດປີ 2020.

ໃນໄລຍະຜ່ານມາອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ກໍໄດ້ມີຄວາມພະຍາຍາມຢ່າງຕັ້ງໜ້າໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ໂດຍເລີ່ມຈາກການເຜີຍແຜ່, ສຶກສາອົບຮົມໃຫ້ປະຊາຊົນມີຄວາມຮັບຮູ້ເຂົ້າໃຈເຖິງຄວາມສຳຄັນຈຳເປັນໃນການປົກປັກຮັກສາປ່າໄມ້ ອັນເຮັດໃຫ້ປ່າໄມ້ ແລະ ເນື້ອທີ່ດິນປ່າໄມ້ ໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາໃຫ້ອຸດົມສົມບູນຂຶ້ນເລື້ອຍໆ.

ໄປຄຽງຄູ່ກັບຜົນງານດ້ານດີດັ່ງກ່າວນັ້ນ, ຢູ່ຫຼາຍທ້ອງຖິ່ນ ປະກົດການຫຍໍ້ທໍ້ອັນໜ້າເປັນຫ່ວງກໍຍັງເກີດຂຶ້ນຢ່າງແຜ່ຫຼາຍ ເຊັ່ນ: ການລັກລອບຕັດໄມ້ນ້ອຍຈາກປ່າທຳມະຊາດແບບຊະຊາຍ ແລະ ເປັນຂະບວນ ເພື່ອເປັນວັດຖຸດິບປ້ອນເຕົາເຜົາຖ່ານ, ໂຮງຕົ້ມເກືອ, ໂຮງຕົ້ມກັ່ນໄມ້ເກດສະໜາ, ເຕົາເຜົາດິນຈີ່, ທຸລະກິດທີ່ນຳໃຊ້ໄມ້ເປັນພະລັງງານອື່ນໆ, ໄມ້ຄ້ຳແບບ ແລະ ເປັນສິນຄ້າ, ຊຶ່ງປະກົດການເຫຼົ່ານີ້ໄດ້ກໍ່ໃຫ້ເກີດມີຜົນກະທົບອັນໃຫຍ່ຫຼວງຕໍ່ຄວາມອຸດົມສົມບູນ ແລະ ຄວາມຍືນນານຂອງປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ເກີດມີຜົນກະທົບທາງລົບຕໍ່ລະບົບນິເວດຂອງປ່າໄມ້ ແລະ ສະພາບເສດຖະກິດ ແລະ ສັງຄົມຂອງແຕ່ລະທ້ອງຖິ່ນ. ນອກຈາກນີ້, ຢູ່ຫຼາຍທ້ອງຖິ່ນຍັງມີການລັກລອບສ້າງເຕົາເຜົາຖ່ານ ແລະ ອະນຸ

ຍາດໃຫ້ມີການດຳເນີນການຜະລິດແບບບໍ່ຖືກຕ້ອງຕາມລະບຽບການ, ບໍ່ທັນມີການຄຸ້ມຄອງ ແລະ ຕິດຕາມກວດກາການດຳເນີນການຜະລິດ, ກວດກາການເຄື່ອນຍ້າຍ ແລະ ການຈຳໜ່າຍຢ່າງເປັນລະບົບ.

ເພື່ອແກ້ໄຂປະກົດການດັ່ງກ່າວ ທັງເຮັດໃຫ້ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໄດ້ຮັບການຄຸ້ມຄອງ ແລະ ນຳໃຊ້ແບບຍືນນານ.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ ດັ່ງນີ້:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ເປັນເຈົ້າການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເພື່ອຈັດຕັ້ງການຄົ້ນຄວ້າເຊື່ອມຊຶມ ແລະ ສຶກສາອົບຮົມພໍ່ແມ່ປະຊາຊົນ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈເປັນເອກະພາບກັບແນວທາງນະໂຍບາຍດ້ານປ່າໄມ້ຂອງພັກ ແລະ ລັດຖະບານ ໂດຍສະເພາະແມ່ນເນື້ອໃນກົດໝາຍວ່າດ້ວຍປ່າໄມ້, ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ແລະ ບັນດານິຕິກຳທີ່ກ່ຽວຂ້ອງອື່ນໆ ເພື່ອກຳແໜ້ນເຖິງຄວາມສຳຄັນຂອງວຽກງານອະນຸລັກ ແລະ ປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ເຫັນໄດ້ຜົນກະທົບຈາກການຕັດໄມ້ທຳລາຍປ່າຕໍ່ການດຳລົງຊີວິດຂອງປະຊາຊົນ, ຕໍ່ສິ່ງແວດລ້ອມ ແລະ ເສດຖະກິດ - ສັງຄົມຂອງຊາດ;
2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ເປັນເຈົ້າການ ຊີ້ນຳຂະແໜງປ່າໄມ້ແຂວງ ເພື່ອປະສານສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເກັບກຳຂໍ້ມູນຈຳນວນເຕົາເຜົາຖ່ານ, ເຕົາເຜົາດິນຈີ່, ເຕົາຕົ້ມເກືອ, ຫົວໜ່ວຍທຸລະກິດທີ່ນຳໃຊ້ໄມ້ເປັນພະລັງງານ, ຮ້ານ ແລະ ສະຖານທີ່ຊື້ - ຂາຍໄມ້ຄ້ຳແບບ ແລະ ໄມ້ຫຼັກຮື້ອຢູ່ພາຍໃນແຂວງຂອງຕົນ, ເພື່ອສັງລວມຈຳນວນທີ່ໄດ້ຮັບອະນຸມັດໃຫ້ສ້າງຕັ້ງ ແລະ ໃຫ້ດຳເນີນທຸລະກິດຢ່າງຖືກຕ້ອງ ແລະ ບໍ່ຖືກຕ້ອງຕາມລະບຽບກົດໝາຍ, ພ້ອມດຽວກັນນັ້ນ ກໍເພື່ອເກັບກຳຂໍ້ມູນແຫຼ່ງທີ່ມາຂອງໄມ້;
3. ໃຫ້ຈັດຕັ້ງການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ຂອງປະຊາຊົນ ຄຸ້ມຄອງ ທີ່ໄດ້ຜ່ານການມອບດິນ-ມອບປ່າ ຫຼື ມີເອກະສານຢັ້ງຢືນການນຳໃຊ້ທີ່ດິນດັ່ງກ່າວ ທີ່ເປັນແຫຼ່ງສະໜອງວັດຖຸດິບໃຫ້ແກ່ເຕົາເຜົາຖ່ານ, ຫົວໜ່ວຍທຸລະກິດທີ່ນຳໃຊ້ໄມ້ເປັນພະລັງງານ, ໄມ້ຄ້ຳແບບ ເພື່ອວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ແບບຍືນນານ;
4. ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າປະຈຳແຂວງ, ນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ໃນການຈັດຕັ້ງກຸ່ມຜະລິດຖ່ານ, ຫົວໜ່ວຍທຸລະກິດນຳໃຊ້ໄມ້ເປັນພະລັງງານ ແລະ ເປັນສິນຄ້າອື່ນໆພາຍໃນທ້ອງຖິ່ນຂອງຕົນ ເພື່ອວາງແຜນຄຸ້ມຄອງ ແລະ ຕິດຕາມກວດກາ;
5. ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງ ຊີ້ນຳຂະແໜງປ່າໄມ້ ໃນການປະເມີນແຜນຄວາມຕ້ອງການວັດຖຸດິບຂອງບັນດາເຕົາເຜົາຖ່ານ, ຫົວໜ່ວຍທຸລະກິດນຳໃຊ້ໄມ້ເປັນພະລັງງານ, ໄມ້ຄ້ຳແບບທີ່ເຄື່ອນໄຫວດຳເນີນທຸລະກິດຖືກຕ້ອງຕາມລະບຽບກົດໝາຍໂດຍໃຫ້ອີງໃສ່ຂໍ້ມູນຄວາມອາດສາມາດຕອບສະໜອງທາງດ້ານວັດຖຸດິບ ຈາກເນື້ອທີ່ຂອງປະຊາຊົນຄຸ້ມຄອງທີ່ໄດ້ ✓

ຜ່ານການມອບດິນ - ມອບປ່າ ຫຼື ມີເອກະສານຢັ້ງຢືນການນຳໃຊ້ທີ່ດິນດັ່ງກ່າວ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງຕ່າງໆ ທີ່ລັດຖະບານອະນຸມັດພາຍໃນທ້ອງຖິ່ນຂອງຕົນໃນແຕ່ລະປີເພື່ອເປັນພື້ນຖານໃນການສັງລວມຕົວເລກເຂົ້າໃນແຜນສະເໜີຂໍອະນຸມັດຊຸດຄົ້ນຈາກລັດຖະບານປະຈຳແຕ່ລະສົກປີ;

6. ໃຫ້ພະແນກກະສິກຳ ແລະ ປ່າໄມ້ສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ ຊຸກຍູ້ບັນດາຫົວໜ່ວຍທຸລະກິດຜະລິດຖ່ານ ແລະ ນຳໃຊ້ໄມ້ເປັນພະລັງງານ ແລະ ເປັນສິນຄ້າ, ລົງທຶນເຂົ້າໃນການປູກໄມ້ ແລະ ຟື້ນຟູປ່າໄມ້ ໂດຍສະເພາະແມ່ນການເຮັດສັນຍາຜູກພັນກັບປະຊາຊົນ ເພື່ອພັດທະນາແຫຼ່ງວັດຖຸດິບໃນເຂດເນື້ອທີ່ດິນຂອງປະຊາຊົນຕອບສະໜອງໃຫ້ແກ່ການຜະລິດ ໂດຍໃຫ້ມີຄວາມຮັບປະກັນສິດຜົນປະໂຫຍດຂອງທັງສອງຝ່າຍ;

7. ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຊີ້ນຳກອງກວດກາປ່າໄມ້ ສົມທົບກັບຂະແໜງປ່າໄມ້, ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ລົງຕິດຕາມກວດກາບັນດາຫົວໜ່ວຍທຸລະກິດຜະລິດຖ່ານ, ນຳໃຊ້ໄມ້ເປັນພະລັງງານ, ໄມ້ຄ້ຳແບບ ແລະ ເປັນສິນຄ້າ ເພື່ອສະກັດກັ້ນການເຄື່ອນໄຫວດຳເນີນທຸລະກິດທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;

8. ໃນກໍລະນີພົບເຫັນມີການລັກລອບຕັດ, ເຄື່ອນຍ້າຍ ຫຼື ຊື້-ຂາຍໄມ້ເພື່ອຜະລິດຖ່ານ, ນຳໃຊ້ໄມ້ເປັນພະລັງງານ, ໄມ້ຄ້ຳແບບ ແລະ ໄມ້ຫຼັກຮົ້ວທີ່ບໍ່ໄດ້ຮັບອະນຸຍາດ ຕາມແຜນອະນຸມັດຊຸດຄົ້ນຈາກລັດຖະບານປະຈຳສົກປີ ແມ່ນໃຫ້ເຈົ້າໜ້າທີ່ປ່າໄມ້ປະຕິບັດມາດຕະການຕໍ່ຜູ້ລະເມີດຕາມລະບຽບກົດໝາຍຢ່າງເຂັ້ມງວດ;

9. ໃຫ້ກົມປ່າໄມ້ ແລະ ກົມກວດກາປ່າໄມ້ ເພີ່ມທະວີຄວາມເອົາໃຈໃສ່ໃນການຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້, ພ້ອມທັງສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດຕົວຈິງໃຫ້ການນຳກະຊວງກະສິກຳ ແລະ ປ່າໄມ້ຊາບ ຢ່າງເປັນປົກກະຕິ;

10. ພາຍຫຼັງໄດ້ຮັບຄຳສັ່ງສະບັບນີ້ແລ້ວ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຕ້ອງຊີ້ນຳໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ຄົ້ນຄວ້າເຊື່ອມຊຶມກຳແໜ້ນເນື້ອໃນຈິດໃຈຂອງຄຳສັ່ງສະບັບນີ້ຢ່າງເລິກເຊິ່ງ, ພ້ອມທັງຈັດຕັ້ງເຜີຍແຜ່ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໃນທ້ອງຖິ່ນຂອງຕົນ ໄດ້ຮັບຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

11. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ລີຕາເຮັງ ຣາຊະພົນ

ບ່ອນນຳສົ່ງ:

- ຫ້ອງວ່າການສູນກາງພັກ 01 ສະບັບ (ໃຊ້ຕາງລາຍງານ);
- ຫ້ອງວ່າການ ສນຍ 01 ສະບັບ (ໃຊ້ຕາງລາຍງານ);
- ຄະນະເລຂາທິການລັດຖະບານ 01 ສະບັບ (ເພື່ອລາຍງານ);
- ກະຊວງແຜນການ ແລະ ການລົງທຶນ 01 ສະບັບ (ເພື່ອຊາບ);
- ກະຊວງອຸດສາຫະກຳ ແລະ ການຄ້າ 01 ສະບັບ (ເພື່ອຊາບ);
- ກະຊວງການເງິນ 01 ສະບັບ (ເພື່ອຊາບ);
- ຫ້ອງວ່າການແຂວງ ແລະ ນະຄອນບ່ອນລະ 01 ສະບັບ (ເພື່ອຊ່ວຍຊີ້ນຳ);
- ເກັບມ້ຽນ 01 ສະບັບ.